ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 237 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 25 ທັນວາ 2020

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງ**

**ກົດໝາຍວ່າດ້ວຍການກວດສອບແຫ່ງລັດ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 21/ສພຊ, ລົງວັນທີ 13 ພະຈິກ 2020 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 28/ຄປຈ, ລົງວັນທີ 11 ທັນວາ 2020.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 21 / **ສພຊ**

ນະຄອນຫຼວງວຽງຈັນ, ວັນທີ 13/11/20

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາ
## ຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ ໃນວາລະກອງປະຊຸມ ຄັ້ງວັນທີ 13 ພະຈິກ 2020.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ ດ້ວຍຄະແນນຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ★ ປະທານສະພາແຫ່ງຊາດ ★

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 89 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 13 ພະຈິກ 2020

# ກົດໝາຍວ່າດ້ວຍ
# ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ

**ມາດຕາ 1 ການປັບປຸງເນື້ອໃນບາງມາດຕາຂອງກົດໝາຍ**

ກົດໝາຍສະບັບນີ້ ກໍານົດເນື້ອໃນການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ ເພື່ອໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງ ດັ່ງນີ້:

**ມາດຕາ 34 ປະທານອົງການກວດສອບແຫ່ງລັດ**

ປະທານອົງການກວດສອບແຫ່ງລັດ ຖືກເລືອກຕັ້ງ ຫຼື ຖືກປົດຕໍາແໜ່ງ ໂດຍກອງປະຊຸມສະພາແຫ່ງຊາດ ຕາມການສະເໜີຂອງປະທານປະເທດ, ມີອາຍຸການເທົ່າກັບອາຍຸການ ຂອງສະພາແຫ່ງຊາດແຕ່ລະຊຸດ.

**ມາດຕາ 35 ສິດ ແລະ ໜ້າທີ່ ຂອງປະທານອົງການກວດສອບແຫ່ງລັດ**

ປະທານອົງການກວດສອບແຫ່ງລັດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບໂດຍກົງ ຕໍ່ສະພາແຫ່ງຊາດ ແລະ ລາຍງານ ຕໍ່ປະທານປະເທດ, ນາຍົກລັດຖະມົນຕີ ແລະ ຄະນະປະຈໍາສະພາແຫ່ງຊາດ ກ່ຽວກັບວຽກງານກວດສອບແຫ່ງລັດ;
2. ຊີ້ນໍາ ແລະ ກວດກາການຈັດຕັ້ງປະຕິບັດວຽກງານກວດສອບແຫ່ງລັດ ທົ່ວປະເທດ;
3. ອອກຂໍ້ຕົກລົງ, ຄໍາສັ່ງ ແລະ ຄໍາແນະນໍາ ກ່ຽວກັບວຽກງານກວດສອບແຫ່ງລັດ;
4. ສະເໜີສ້າງ ຫຼື ປັບປຸງນິຕິກໍາ ກ່ຽວກັບວຽກງານກວດສອບ ຕໍ່ຄະນະປະຈໍາສະພາແຫ່ງຊາດ;
5. ຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບເນື້ອໃນບົດສະຫຼຸບຜົນການກວດສອບ ຂອງອົງການກວດສອບແຫ່ງລັດ;
6. ເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດ, ຄະນະປະຈໍາສະພາແຫ່ງຊາດ ແລະ ກອງປະຊຸມລັດຖະບານ ກ່ຽວກັບບັນຫາທີ່ພົວພັນເຖິງວຽກງານກວດສອບ;
7. ລາຍງານ, ຕອບຂໍ້ຊັກຖາມ ກ່ຽວກັບຜົນການກວດສອບ ຕໍ່ສະພາແຫ່ງຊາດ;
8. ສະເໜີ ກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ກ່ຽວຂ້ອງ ແລະ ການຈັດຕັ້ງ ທີ່ຄຸ້ມຄອງເປົ້າໝາຍຖືກກວດສອບ ສຶກສາອົບຮົມ, ລົງວິໄນ ຫຼື ດໍາເນີນຄະດີ ຕາມແຕ່ລະກໍລະນີ ຕໍ່ເປົ້າໝາຍຖືກກວດສອບ;

9. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ພະນັກງານ ຂອງອົງການກວດສອບແຫ່ງລັດ ແຕ່ຂັ້ນຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າສະຖາບັນ, ຮອງປະທານອົງການກວດສອບປະຈຳພາກ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າສະຖາບັນ, ຫົວໜ້າຫ້ອງການອົງການກວດສອບປະຈຳພາກ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ຂັ້ນນັກກວດສອບ;

10. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານ ຂອງອົງການກວດສອບແຫ່ງລັດ ປະຈຳຫົກເດືອນ, ປະຈຳປີ ແລະ ຫ້າປີ ຕໍ່ປະທານປະເທດ, ນາຍົກລັດຖະມົນຕີ ແລະ ສະພາແຫ່ງຊາດ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 44 ມາດຕະຖານສະເພາະ ຂອງປະທານອົງການກວດສອບປະຈຳພາກ**

ນອກຈາກມາດຕະຖານລວມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ ສະບັບເລກທີ 09/ສພຊ, ລົງວັນທີ 11 ພະຈິກ 2016 ແລ້ວ, ປະທານອົງການກວດສອບປະຈຳພາກ ຍັງຕ້ອງເຄີຍດຳລົງຕຳແໜ່ງຫົວໜ້າກົມ ຫຼື ຫົວໜ້າອົງການລັດທຽບເທົ່າກົມ ຂຶ້ນໄປ. ກໍລະນີທີ່ມີຄວາມຈຳເປັນ ປະທານອົງການກວດສອບແຫ່ງລັດ ອາດສະເໜີຜູ້ເຄີຍດຳລົງຕຳແໜ່ງຕໍ່າກວ່າກໍໄດ້ ຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ.

**ມາດຕາ 2 ການປັບປຸງແທນເນື້ອໃນ ຂອງມາດຕາ**

ກົດໝາຍສະບັບນີ້ ປັບປຸງແທນເນື້ອໃນມາດຕາ 34, ມາດຕາ 35 ແລະ ມາດຕາ 44 ຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ ສະບັບເລກທີ 09/ສພຊ, ລົງວັນທີ 11 ພະຈິກ 2016.

**ມາດຕາ 3 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດທັນທີ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ ແລະ ໃຫ້ນຳເອົາກົດໝາຍສະບັບນີ້ ພິມລົງຈົດໝາຍເຫດທາງລັດຖະການ ຕາມພາຍຫຼັງ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້